**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

----===000===----

ກະຊວງໂຍທາທິການ ແລະ ຂົນສົ່ງ
ຄະນະວິຊາການຊ່ວຍວຽກສາມສ້າງ

ນະຄອນຫລວງວຽງຈັນ, ວັນທີ: **19/11/2012.**

# ບົດບັນທຶກ

## ການແບ່ງຄວາມຮັບຜິດຊອບ ເພື່ອຈັດຕັ້ງເຮັດທົດລອງສາມສ້າງ ສຳລັບຂົງເຂດໂຍທາທິການທາງນ້ຳ ລະຫວ່າງກົມໂຍທາທິການທາງນ້ຳ, ພະແນກ ຍທຂ ນະຄອນຫລວງວຽງຈັນ ແລະຫ້ອງການ ຍທຂ ເມືອງທົດລອງ

- ອີງຕາມມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 15/2/2012.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 16/ນຍ, ລົງວັນທີ 15/6/2012.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 398/ນຍ, ລົງວັນທີ 12/9/2012 ວ່າດ້ວຍການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ສົກປີ 2012-2013.
- ອີງຕາມຄຳສັ່ງແນະນຳຂອງລັດຖະມົນຕີວ່າການ, ສະບັບເລກທີ 15562/ຍທຂ, ລົງວັນທີ 17/9/2012.

I. **ກົມໂຍທາທິການທາງນ້ຳ ຮັບຜິດຊອບ:**

1. ສ້າງ ແລະປັບປຸງບັນດາກົດໝາຍ, ຂໍ້ຕົກລົງ, ລະບຽບການ ແລະມາດຕະຖານເຕັກນິກຕ່າງໆ ທີ່ເຫັນວ່າຈຳເປັນ ແລະຍັງອັດຕັນ ໃຫ້ສອດຄ່ອງຕາມທິດສາມສ້າງ.
2. ເປັນເຈົ້າການໃນການຕິດຕາມກວດກາ ນັບທັງສ້າງກົນໄກຕ່າງໆ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໂຍທາທິການທາງນ້ຳຂອງພະແນກ ຍທຂ ນະຄອນຫລວງ ແລະບັນດາຫ້ອງການ ຍທຂ ເມືອງທົດລອງ ໃຫ້ຮັບປະກັນທາງດ້ານຄຸນນະພາບ ແລະຄວາມໂປ່ງໃສ, ໂດຍອີງຕາມມາດຕະຖານດ້ານເຕັກນິກ, ກຳນົດໝາຍລາຄາຫົວໜ່ວຍ ແລະລະບຽບການອື່ນໆຂອງກະຊວງ.
3. ສ້າງ ແລະປັບປຸງມາດຕະຖານເຕັກນິກ ການສຳຫລວດ-ອອກແບບ ແລະກໍ່ສ້າງກິດຈະການທາງນ້ຳໃນຂອບເຂດທົ່ວປະເທດ.
4. ສ້າງ ແລະປັບປຸງໂຄງປະກອບລາຄາຫົວໜ່ວຍກໍ່ສ້າງກິດຈະການທາງນ້ຳ, ການຂຸດຄົ້ນຫີນແຮ່ຊາຍ ແລະການຂົນສົ່ງທາງນ້ຳ.
5. ຈັດຝຶກອົບຮົມ, ສ້າງບົດແນະນຳ ຫລືປຶ້ມຄູ່ມື ໃນການນຳໃຊ້ກຳນົດໝາຍລາຄາຫົວໜ່ວຍ, ມາດຕະຖານເຕັກນິກ ແລະລະບຽບການປະມູນຕ່າງໆ (ເປັນພາສາລາວ) ໃຫ້ພະແນກ ຍທຂ ນະຄອນຫລວງ ແລະບັນດາຫ້ອງການ ຍທຂ ເມືອງທົດລອງ.

6. ຄຸ້ມຄອງການຂົນສົ່ງທາງນ້ຳລະຫວ່າງປະເທດ ແລະທາງທະເລ.
7. ຄົ້ນຄວ້າຊອກຫາແຫລ່ງທຶນພາຍໃນ ແລະຕ່າງປະເທດ ເພື່ອມາພັດທະນາວຽກງານໂຍທາທິການທາງນ້ຳ.
8. ສ້າງລະບົບຖານຂໍ້ມູນວຽກງານໂຍທາທິການທາງນ້ຳໃນຂອບເຂດທົ່ວປະເທດ.
9. ກວດກາແບບ ແລະລາຄາຫົວໜ່ວຍທຸກໆໂຄງການກໍ່ສ້າງ.

**II. ພະແນກ ຍທຂ ນະຄອນຫລວງວຽງຈັນ ຮັບຜິດຊອບ:**

1. ຜັນຂະຫຍາຍກົດໝາຍ, ດຳລັດ, ມະຕິຕົກລົງ,ຄຳສັ່ງ, ລະບຽບການ, ມາດຕະຖານເຕັກນິກ ແລະລາຄາຫົວໜ່ວຍວຽກທາງນ້ຳຂອງກະຊວງ ຍທຂ.
2. ຄົ້ນຄວ້າສ້າງແຜນການພັດທະນາວຽກງານໂຍທາທິການທາງນ້ຳ ໄລຍະສັ້ນ, ກາງ ແລະໄລຍະຍາວ ໃນຂອບເຂດນະຄອນຫລວງວຽງຈັນ ພ້ອມທັງເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາໂຄງການເຫລົ່ານັ້ນ.
3. ເປັນເຈົ້າການໃນການປະມູນຈັດຊື້-ຈັດຈ້າງ ຫລືເຈລະຈາ ແລະຈັດຕັ້ງປະຕິບັດທຸກໆໂຄງການກໍ່ສ້າງທາງນ້ຳທີ່ຢູ່ໃນຂອບເຂດນະຄອນຫລວງວຽງຈັນ. ສຳລັບໂຄງການທີ່ມີມູນຄ່າຫລາຍກວ່າ 10 ຕື້ກີບ ຕ້ອງໄດ້ຜ່ານການກວດກາທາງດ້ານເຕັກນິກ ແລະລາຄາຫົວໜ່ວຍຈາກກົມໂຍທາທິການທາງນ້ຳກ່ອນ, ຫລັງຈາກນັ້ນ ຈຶ່ງນຳໄປຈັດຕັ້ງປະຕິບັດ. ສຳລັບຫົວໜ້າໂຄງການ ຖ້າຫາກພະແນກ ຍທຂ ນະຄອນຫລວງບໍ່ມີພະນັກງານວິຊາການພຽງພໍ ທາງກະຊວງຈະຄົ້ນຄວ້າປະກອບພະນັກງານລົງຊ່ວຍ.
4. ອອກໃບຢັ້ງຢືນຮັບຮອງເອົາແບບ ແລະມູນຄ່າການກໍ່ສ້າງຂອງບັນດາໂຄງການກໍ່ສ້າງກິດຈະການທາງນ້ຳທີ່ມີມູນຄ່າແຕ່ 5-50 ຕື້ກີບ ໃນຂອບເຂດນະຄອນຫລວງວຽງຈັນ ພາຍໃຕ້ການກວດກາດ້ານເຕັກນິກ ແລະລາຄາຫົວໜ່ວຍກໍ່ສ້າງທາງນ້ຳຈາກກົມໂຍທາທິການທາງນ້ຳ.
5. ກວດເອກະສານການອອກແບບດ້ານເຕັກນິກ, ປະສິດທິຜົນການລົງທຶນ ແລະເອກະສານອື່ນໆ ທີ່ພົວພັນກັບໂຄງການ ແລ້ວລາຍງານຂໍອະນຸມັດຈາກຂັ້ນເທິງ.
6. ຄຸ້ມຄອງການຂຸດຄົ້ນຫີນແຮ່-ຊາຍໃນຂອບເຂດນະຄອນຫລວງ.
7. ອອກໃບອະນຸຍາດການຂຸດຄົ້ນຫີນແຮ່-ຊາຍ ຕາມລຳແມ່ນ້ຳຂອງ, ຖ້າເນື້ອທີ່ຫລາຍກວ່າ 5 ເຮັກຕາ ຂຶ້ນໄປ ຕ້ອງໄດ້ຮັບການເຫັນດີເປັນເອກະພາບກັບກົມໂຍທາທິການທາງນ້ຳ.
8. ອອກທະບຽນເຮືອໂດຍສານຂະໜາດຫລາຍກວ່າ 100 ບ່ອນນັ່ງຂຶ້ນໄປ ແລະເຮືອບັນທຸກສິນຄ້າຂະໜາດຫລາຍກວ່າ 300 ໂຕນຂຶ້ນໄປ ໂດຍເຫັນດີເປັນເອກະພາບກັບກົມໂຍທາທິການທາງນ້ຳ.
9. ຄຸ້ມຄອງການຂົນສົ່ງທາງນ້ຳລະຫວ່າງນະຄອນຫລວງກັບກັບແຂວງ ແລະລະຫວ່າງປະເທດ ທີ່ມີຊາຍແດນຕິດກັບນະຄອນຫລວງ.

10. ສະຫລຸບລາຍງານການຈັດຕັ້ງປະຕິບັດວຽກງານໃຫ້ເຈົ້າຄອງນະຄອນຫລວງ ແລະກະຊວງ ຍທຂ ເປັນປະຈຳເດືອນ, ງວດ ແລະປະຈຳປີ.

**III. ຫ້ອງການ ຍທຂ 3 ເມືອງທົດລອງ ຮັບຜິດຊອບ:**

1. ຈັດຕັ້ງ ແລະປະຕິບັດແຜນພັດທະນາວຽກງານໂຍທາທິການທາງນ້ຳໃນແຕ່ໄລຍະ ໃນຂອບເຂດເມືອງຂອງຕົນ ນັບທັງເປັນເຈົ້າການຄຸ້ມຄອງ, ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາໂຄງການເຫລົ່ານັ້ນ.
2. ກຳນົດສະຖານທີ່ການປຸກສ້າງຕາມແຄມນ້ຳເຊັ່ນ: ຮ້ານອາຫານເຮືອແພ, ການລ້ຽງປາກະຊັງ, ທ່າບັກ ແລະອື່ນໆ.
3. ຮັກສາເຂດສະຫງວນແຄມນ້ຳ ແລະເຂດທີ່ໄດ້ຮັບການກໍ່ສ້າງແລ້ວ.
4. ຄຸ້ມຄອງການຂຸດຄົ້ນຫີນແຮ່-ຊາຍໃນຂອບເຂດເມືອງຂອງຕົນຮັບຜິດຊອບ.
5. ເປັນເຈົ້າການໃນການປະມູນຈັດຊື້-ຈັດຈ້າງ ຫລືເຈລະຈາ ແລະຈັດຕັ້ງປະຕິບັດທຸກໆໂຄງການກໍ່ສ້າງທາງນ້ຳທີ່ຢູ່ໃນຂອບເຂດເມືອງຂອງຕົນ. ສຳລັບໂຄງການທີ່ມີມູນຄ່າຫລາຍກວ່າ **10** ຕື້ກີບ ຕ້ອງໄດ້ຜ່ານການກວດກາທາງດ້ານເຕັກນິກ ແລະລາຄາທົ່ວພ່ອຍຈາກກົມໂຍທາທິການທາງນ້ຳກ່ອນ, ຫລັງຈາກນັ້ນ ຈຶ່ງນຳໄປຈັດຕັ້ງປະຕິບັດ. ສຳລັບຫົວໜ້າໂຄງການ ຖ້າຫາກຫ້ອງການ ຍທຂ ເມືອງທົດລອງບໍ່ມີພະນັກງານວິຊາການພຽງພໍ ທາງພະແນກ ຍທຂ ນະຄອນຫລວງ ຈະຄົ້ນຄວ້າປະກອບພະນັກງານລົງຊ່ວຍ.
6. ຕິດຕາມ, ກວດກາ ແລະຄຸ້ມຄອງການຂຸດຄົ້ນຫີນແຮ່-ຊາຍໃນຂອບເຂດເມືອງຂອງຕົນ.
7. ອອກໃບອະນຸຍາດການຂຸດຄົ້ນຫີນແຮ່-ຊາຍ ຕາມນ້ຳສາຂາຂອງແມ່ນ້ຳຂອງຊຶ່ງບໍ່ແມ່ນນ້ຳສາຂາລະຫວ່າງຊາດ.
8. ເປັນເຈົ້າການໃນການຕິດຕາມການກໍ່ສ້າງ ແລະການຂຸດຄົ້ນຫີນແຮ່-ຊາຍເບື້ອງຝັ່ງໄທ ທີ່ເຫັນວ່າຈະສົ່ງຜົນກະທົບຕໍ່ເບື້ອງຝັ່ງລາວ ເພື່ອລາຍງານໃຫ້ເມືອງ ແລະ ພະແນກ ຍທຂ ນະຄອນຫລວງ ໃຫ້ທັນເວລາ.
9. ສຳຫລວດ ແລະເກັບກຳຂໍ້ມູນຄວາມຕ້ອງການພັດທະນາວຽກງານທາງນ້ຳພາຍໃນເມືອງຂອງຕົນ.
10. ຄຸ້ມຄອງທ່າເຮືອ, ເສັ້ນທາງເດີນເຮືອ ແລະເຮືອຂົນສົ່ງທາງນ້ຳຕາມດ່ານປະເພນີ ແລະດ່ານທ້ອງຖິ່ນ, ແພທຽບເຮືອ ແລະປ້ອງກັນຕະຝັ່ງໃນຂອບເຂດເມືອງຂອງຕົນ.
11. ກວດກາເຕັກນິກເຮືອ ແລະຂຶ້ນທະບຽນເຮືອໂດຍສານຂະໜາດນ້ອຍກວ່າ **100** ບ່ອນນັ່ງລົງມາ ແລະເຮືອຂົນສົ່ງສິນຄ້າຂະໜາດນ້ອຍກວ່າ **300** ໂຕນລົງມາ ແລະອອກໃບອະນຸຍາດດຳເນີນທຸລະກິດຂົນສົ່ງທາງນ້ຳ.
12. ສະຫລຸບລາຍງານການຈັດຕັ້ງປະຕິບັດວຽກງານໃຫ້ເຈົ້າເມືອງ ແລະ ພະແນກ ຍທຂ ນະຄອນຫລວງ ວຽງຈັນ ເປັນປະຈຳເດືອນ, ງວດ ແລະປະຈຳປີ.

**IV. ຜົນສັກສິດ:**

1. ບົດບັນທຶກສະບັບນີ້ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນຕົ້ນໄປ.

2. ພາຍຫລັງທີ່ໄດ້ລົງລາຍເຊັນແລ້ວ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ກະກຽມຄວາມພ້ອມດ້ານຕ່າງໆ ໂດຍສະເພາະແມ່ນດ້ານບຸກຄະລາກອນ, ແຜນການ ແລະງົບປະມານ ເພື່ອຈັດຕັ້ງປະຕິບັດເນື້ອໃນບົດບັນທຶກສະບັບນີ້ໃຫ້ປະກົດຜົນເປັນຈິງ.

<u>ຫົວໜ້າກົມໂຍທາທິການທາງນ້ຳ</u>

<u>ຫົວໜ້າພະແນກ ຍທຂ</u>
<u>ນະຄອນຫລວງວຽງຈັນ</u>

<u>ຫົວໜ້າຫ້ອງການ ຍທຂ</u>
<u>ເມືອງສີສັດຕະນາກ</u>

<u>ຫົວໜ້າຫ້ອງການ ຍທຂ</u>
<u>ເມືອງຈັນທະບູລີ</u>

<u>ຫົວໜ້າຫ້ອງການ ຍທຂ</u>
<u>ເມືອງສັງທອງ</u>